**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຈຳປາສັກ

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 154/ຖວທ.ຈສ

ແຂວງຈຳປາສັກ, ວັນທີ 3 ທັນວາ 2021

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະບໍລິຫານງານ, ສະມາຊິກ ແລະ ກອງເລຂາ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ແຂວງຈຳປາສັກ

**(Champasak Destination Management Network – DMN)**

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງຈຳປາສັກ, ສະບັບເລກທີ 1568/ຖວທ,ຈສ, ລົງວັນທີ 24/12/2018.
- ອີງຕາມສັນຍາເງິນກູ້ຢືມລະຫວ່າງລັດຖະບານຂອງ ສປປ ລາວ ແລະ ທະນາຄານພັດທະນາອາຊີ ສຳລັບໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງໄລຍະ 1 ໃນ ສປປ ລາວ, ເລກທີ Loan No. 3156 – LAO, ລົງວັນທີ 27/10/2014.
- ອີງຕາມສັນຍາເງິນຊ່ວຍເຫຼືອລ້າລະຫວ່າງລັດຖະບານຂອງ ສປປ ລາວ ແລະ ທະນາຄານພັດທະນາອາຊີ ກ່ຽວກັບການໃຫ້ການຊ່ວຍເຫຼືອລ້າ ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງໄລຍະ 2 ໃນ ສປປ ລາວ, ເລກທີ Grant No. 0599 – LAO, ລົງວັນທີ 16/10/2018.

**ຫົວໜ້າພະແນກ ຕົກລົງ:**

**ມາດຕາ 1: ແຕ່ງຕັ້ງຄະນະບໍລິຫານງານເຄືອຂ່າຍ ພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງ ການທ່ອງທ່ຽວແຂວງຈຳປາສັກ ເຊິ່ງປະກອບມີບັນດາທ່ານດັ່ງນີ້:**

| | | |
|---|---|---|
| 1) ທ່ານ ສຸລິນ ເພັດທານີ | ຮອງຫົວໜ້າພະແນກ ຖວທ ແຂວງຈຳປາສັກ | ເປັນຫົວໜ້າ |
| 2) ທ່ານ ນາງ ມາລາ ຈັນທະລາມ | ປະທານສະມາຄົມຫັດຖະກຳແຂວງ | ເປັນຮອງ |
| 3) ທ່ານ ບຸນແຖມ ສຸພັນສາ | ປະທານສະມາຄົມທຸລະກິດທ່ອງທ່ຽວແຂວງ | ເປັນຄະນະ |
| 4) ທ່ານ ທຸຍ ເພັດສະຫວັນ | ປະທານສະມາຄົມໂຮງແຮມ ແລະ ຮ້ານອາຫານແຂວງ | ເປັນຄະນະ |
| 5) ທ່ານ ທຳມະນູນ ສີລິປຸນໂຍ | ປະທານກຸ່ມພະນັກງານນຳທ່ຽວແຂວງ | ເປັນຄະນະ |
| 6) ທ່ານ ນາງ ສອນທິດາ ອຸນາພົມ | ຜູ້ອຳນວຍການແຫຼ່ງທ່ອງທ່ຽວຕາດເຍືອງ | ເປັນຄະນະ |
| 7) ທ່ານ ນາງ ແອນນາ ໄຊຍະສານ | ຄະນະບໍລິຫານງານກຸ່ມພະນັກງານນຳທ່ຽວແຂວງ | ເປັນຄະນະ |

**+ ໜ້າທີ່ຂອງຄະນະບໍລິຫານງານເຄືອຂ່າຍ DMN ແຂວງຈໍາປາສັກ:**

- ໃຫ້ທິດຊີ້ນໍາໃນການສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກໍາຂອງເຄືອຂ່າຍ DMN ແຂວງຈໍາປາສັກ ຜ່ານກອງປະຊຸມເຄືອຂ່າຍ DMN ແຂວງຈໍາປາສັກທີ່ຈະໄດ້ຈັດຂຶ້ນຢ່າງໜ້ອຍ 2 ຄັ້ງຕໍ່ປີ ໂດຍການເປັນເຈົ້າການຮ່ວມກັນລະຫວ່າງພາກລັດ ແລະ ພາກທຸລະກິດ.
- ເປັນເຈົ້າການໃນການນໍາເອົາບັນຫາ ແລະ ອຸປະສັກໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວແຂວງຈໍາປາສັກ ທີ່ຖືກຍົກຂຶ້ນໃນກອງປະຊຸມເຄືອຂ່າຍ ເຊິ່ງຕິດພັນກັບຂະແໜງການອື່ນ ສະເໜີຕໍ່ການນໍາຂອງພະແນກ ຖວທ ແຂວງ ເພື່ອເປັນຂໍ້ວຕໍ່ປະສານກັບຂະແໜງການກ່ຽວຂ້ອງ.

**ມາດຕາ 2: ແຕ່ງຕັ້ງສະມາຊິກເຄືອຂ່າຍ ພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວແຂວງຈໍາປາສັກ ເຊິ່ງປະກອບມີບັນດາທ່ານດັ່ງນີ້:**

| | | |
|---|---|---|
| 1) | ທ່ານ ສຸລິຈັນ ສິມບັດດວງ | ຫົວໜ້າຂະແໜງທ່ອງທ່ຽວ |
| 2) | ທ່ານ ນະ ຂັນທະວົງ | ຫົວໜ້າ ສູນຝຶກອົບຮົມ ຖວທ |
| 3) | ທ່ານ ນາງ ແທ່ນຄໍາ ແສງແກ້ວວົງພະຈັນ | ຮອງຫົວໜ້າຂະແໜງທ່ອງທ່ຽວ |
| 4) | ທ່ານ ສຸລິຍາ ສີຫາປັນຍາ | ຮອງຫົວໜ້າຂະແໜງທ່ອງທ່ຽວ |
| 5) | ທ່ານ ນາງ ຈັນດາວອນ ສຸດທະວົງ | ຄະນະບໍລິຫານງານສະມາຄົມທຸລະກິດທ່ອງທ່ຽວ |
| 6) | ທ່ານ ນາງ ເມດຕາສັກ ໂພສະນະຣັກ | ຜູ້ອໍານວຍການໂຮງແຮມປາກເຊ |
| 7) | ທ່ານ ນາງ ສີດາພອນ ສິມພອນໄຊ | ຜູ້ອໍານວຍການໂຮງແຮມຈໍາປາເຣຊິເດັ້ນ |
| 8) | ທ່ານ ໄຊຊະນະ ໂພທິສານ | ການຕະຫຼາດ ລັດວິສາຫະກິດການບິນລາວ, ສາຂາປາກເຊ |
| 9) | ທ່ານ ບູນ ໄຊຍະວົງ | ຜູ້ອໍານວຍການບໍລິສັດທ່ອງທ່ຽວກຣີນພາຣາໄດສ໌ |
| 10) | ທ່ານ ນາງ ຂັນທອງ ວິໄລສອນ | ປະທານກຸ່ມ ສິ້ນ, ແພໄໝ ບ້ານສະຜ່າຍ |
| 11) | ທ່ານ ນາງ ພຽງມະນີ ສາຍທອງ | ຄະນະສະມາຄົມໂຮງແຮມ ແລະ ຮ້ານອາຫານ |

**+ ໜ້າທີ່ຂອງສະມາຊິກເຄືອຂ່າຍ DMN ແຂວງຈໍາປາສັກ:**

ມີໜ້າທີ່ປະກອບຄໍາຄິດຄໍາເຫັນເຂົ້າໃນການສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກໍາຂອງເຄືອຂ່າຍ DMN ແຂວງຈໍາປາສັກ ຜ່ານກອງປະຊຸມເຄືອຂ່າຍທີ່ຈະໄດ້ຈັດຂຶ້ນຢ່າງໜ້ອຍ 2 ຄັ້ງຕໍ່ປີ ໂດຍການເປັນເຈົ້າການຮ່ວມກັນລະຫວ່າງພາກລັດ ແລະ ພາກທຸລະກິດ.

**ມາດຕາ 3: ແຕ່ງຕັ້ງກອງເລຂາ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວແຂວງຈໍາປາສັກ ເຊິ່ງປະກອບມີບັນດາທ່ານດັ່ງນີ້:**

| | | | | |
|---|---|---|---|---|
| 1) | ທ່ານ ສຸລິທັດ ຈັນທະລາສິນ | ວິຊາການ | ໂຄສະນາການທ່ອງທ່ຽວ | ຫົວໜ້າ |
| 2) | ທ່ານ ນາງ ຄໍາພູວຽງ ຈັນທິລາດ | ວິຊາການ | ພັດທະນາການທ່ອງທ່ຽວ | ຮອງຫົວໜ້າ |
| 3) | ທ່ານ ອຸໄທ ຄໍາສິມພູ | ວິຊາການ | ໂຄສະນາການທ່ອງທ່ຽວ | ເປັນຄະນະ |
| 4) | ທ່ານ ນາງ ໝູຖິ່ນ ສຸນາສິນ | ວິຊາການ | ຄຸ້ມຄອງການທ່ອງທ່ຽວ | ເປັນຄະນະ |
| 5) | ທ່ານ ນາງ ສຸກສະຫວັນ ສຸວັນນາຄີ | ເລຂາສະມາຄົມໂຮງແຮມ ແລະ ຮ້ານອາຫານແຂວງ | | ເປັນຄະນະ |

6) ທ່ານ ນາງ ສຸກສະຫວັນ ອິນທະພອນ ເລຂາ ສະມາຄົມຫັດຖະກຳແຂວງ ເປັນຄະນະ

**+ ໜ້າທີ່ຂອງກອງເລຂາເຄືອຂ່າຍ DMN ແຂວງຈຳປາສັກ:**

- ຈັດກອງປະຊຸມເຄືອຂ່າຍ DMN ແຂວງຈຳປາສັກຢ່າງໜ້ອຍ 2 ຄັ້ງຕໍ່ປີ: ກະກຽມວາລະກອງປະຊຸມ, ຮ່າງບັນເຊີນ, ກະກຽມສະຖານທີ່, ເອກະສານ ແລະ ອຸປະກອນສຳລັບກອງປະຊຸມ, ຂຶ້ນແຜນງົບປະມານ ແລະ ເຊີນຜູ້ເຂົ້າຮ່ວມ. ບັນທຶກເນື້ອໃນກອງປະຊຸມ, ເຮັດບົດລາຍງານ ແລະ ແຈກຢາຍໃຫ້ແກ່ສະມາຊິກເຄືອຂ່າຍພາຍຫຼັງສຳເລັດກອງປະຊຸມ.
- ປະສານງານກັບພາກລັດ, ພາກທຸລະກິດ, ໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວແຂວງຈຳປາສັກ ເພື່ອສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳຂອງເຄືອຂ່າຍ DMN ແຂວງຈຳປາສັກປະຈຳປີ.

**ມາດຕາ 4:** ສຳລັບງົບປະມານໃນການເຄື່ອນໄຫວວຽກງານຂອງເຄືອຂ່າຍ DMN ແຂວງຈຳປາສັກແມ່ນໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 ເປັນຜູ້ສະໜັບສະໜູນ.

**ມາດຕາ 5:** ຂະແໜງການກ່ຽວຂ້ອງ, ບັນທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ.

**ມາດຕາ 6:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 596/ຖວທ.ຈສ, ລົງວັນທີ 08/06/2020.

**ຫົວໜ້າພະແນກ**

**ນ. ແສງສຸວັນ ຊຸຍພະສິດ**